**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# <u>ບົດອອກຂ່າວ</u>

ໂດຍປະຕິບັດ ຕາມຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 05/ນຍ, ລົງວັນທີ 08 ພຶດສະພາ 2018 ຄຳສັ່ງວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ ໃນລະຫ່ວາງວັນທີ 08 ຫາ 17 ທັນວາ 2018 ກົມກວດກາປ່າໄມ້ ໄດ້ແຕ່ງເຈົ້າໜ້າທີ່ປ່າໄມ້ ລົງສົມທົບກັບ ກອງກວດກາປ່າໄມ້ແຂວງບໍ່ແກ້ວ, ທີມງານ P-WEN ຄະນະວິຊາການຂອງໂຄງການ WWF ລວມທັງໝົດ 50 ທ່ານ, ຍິງ 5 ທ່ານ ໄດ້ປະຊຸມປຶກສາຫາລື ແລະ ວາງແຜນຮ່ວມກັນ ເພື່ອລົງກວດກາ ການລັກລອບ ຊື້ - ຂາຍ ເຄື່ອນຍ້າຍ ຜະລິດຕະພັນສັດປ່າ ແລະ ເຄື່ອງປ່າຂອງດົງ ຢູ່ເຂດ ດ່ານຖິ່ນ ເມືອງຫ້ວຍຊາຍ ແລະ ເຂດເສດຖະກິດພິເສດສາມຫຼ່ຽມຄຳ ຜ່ານການລົງກວດກາຕົວຈິງສາມາດຍຶດໄດ້ດັ່ງນີ້:

1. **ເຂດດ່ານຖິ່ນ ເມືອງຫ້ວຍຊາຍ.**

- **ປະເພດສັດປ່າ:**

ຜ່ານການກວດກາໄດ້ພົບເຫັນຟານຈຳນວນ 01 ໂຕ ນ້ຳໜັກ 22 ກິໂລກຼາມ, ໝູປ່າ ( ສິ້ນສ່ວນ ) ນ້ຳໜັກ 17 ກິໂລກຼາມ, ອົ້ນຈຳນວນ 6 ໂຕ, ນ້ຳໜັກ 12,7 ກິໂລກຼາມ, ເຫງັນ ຈຳນວນ 5 ໂຕ, ນ້ຳໜັກ 19,7 ກິໂລກຼາມ.

<u>**ລວມນ້ຳໜັກ 71,4 ກິໂລກຼາມ.**</u>

- **ປະເພດເຄື່ອງປ່າຂອງດົງ ໄດ້ກວດພົບ ແລະ ຍຶດເຄື່ອງປ່າຂອງດົງປະເພດຕ່າງໆ.**

ສະຄານ ລວມນ້ຳໜັກ 240 ກິໂລກຼາມ, ຫວາຍຂົມ, ຫວາຍນົກຂໍ້ ແລະ ຫວາຍຝາດ ລວມນ້ຳໜັກ 1,295 ກິໂລກຼາມ ແລະ ທົວຕາວ ລວມນ້ຳໜັກ 315 ກິໂລກຼາມ.

<u>**ລວມນ້ຳໜັກທັງໝົດ 1,850 ກິໂລກຼາມ.**</u>

2. **ເຂດເສດຖະກິດພິເສດ ສາມຫຼ່ຽມຄຳ:**

ໄດ້ລົງກວດກາຮ້ານຂາຍເຄື່ອງຫັດຖະກຳ ນາງ ຈານເປົາ ພົບເຫັນດັ່ງນີ້: ເຂົາກວາງ 1 ອັນ, ນ້ຳໜັກ1,8 ກິໂລກຼາມ, ນໍເຮດ 1 ອັນ, ນ້ຳໜັກ 0,4 ກິໂລກຼາມ, ໜັງຊ້າງ 1 ອັນ 0,4 ກິໂລກຼາມ, ເຂົາຟານ 1 ອັນ 0,2 ກິໂລກຼາມ, ກະດູກ 1 ອັນ, ນ້ຳໜັກ 1,6 ກິໂລກຼາມ, ຊິ້ນສ່ວນຄ້າຍຄືເຂົາສັດ ຈຳນວນ 4 ອັນ ແລະ ແຂ້ວສັດ 2 ອັນ ນ້ຳໜັກ 0,1 ກິໂລກຼາມ.

<u>**ລວມນ້ຳໜັກທັງໝົດ 4,5 ກິໂລກຼາມ.**</u>

3. **ເມືອງຕົ້ນເຜີ້ງ.**

- **ຍຶດໄດ້ສິ້ນສ່ວນສັດປ່າ, ລິ່ນມີຊີວິດ ແລະ ເຫຼົ້າບອງສິ້ນສ່ວນສັດປ່າ**

- **ປະເພດເຫຼົ້າບອງສິ້ນສ່ວນສັດປ່າ.**

ເຫຼົ້າບອງຢາພື້ນເມືອງ 6 ໂຖ ແລະ ເຫຼົ້າບອງຢາປະເພດສັດປ່າ 16 ໂຖ.

<u>**ລວມທັງໝົດ 22 ໂຖ**</u>

➢ **ປະເພດສິ້ນສ່ວນສັດປ່າ ໄດ້ພົບເຫັນດັ່ງນີ້:**

ເຂົາກວາງອ່ອນ 0,2 ກິໂລກຼາມ, ໜັງຊ້າງ 0,9 ກິໂລກຼາມ, ຂົນເໜັ້ນ 0,2 ກິໂລກຼາມ, ພິ່ນເໜັນ 0,5 ກິໂລກຼາມ, ບີກະທິງ 0,1 ກິໂລກຼາມ, ໂຄງເສືອ 0,2ກິໂລກຼາມ, ກັບແກ້ແຫ້ງ 0,7 ກິໂລກຼາມ ແລະ ເຂົາສັດ 0,2 ກິໂລກຼາມ.

**ລວມນ້ຳໜັກທັງໝົດ 3 ກິໂລກຼາມ**

➢ **ສັດປ່າທີ່ຍັງມີຊີວິດ.**

ພົບເຫັນລີ່ນ 1 ໂຕ, ນ້ຳໜັກ 1,7 ກິໂລກຼາມ.

**ລວມນ້ຳໜັກທັງໝົດ 1,7 ກິໂລກຼາມ.**

**ລວມທັງໝົດ 5 ຮ້ານ ມີຈຳນວນ 32 ສິ້ນສ່ວນ ລວມນ້ຳໜັກທັງໝົດ 1,930.6 ກິໂລກຼາມ.**

ທັງໝົດທີ່ກ່າວມານີ້ແມ່ນໄດ້ຍຶດໄວ້ເປັນຂອງກາງ ເພື່ອດຳເນີນຄະດີ.

ຕໍ່ກັບບັນຫາດັ່ງກ່າວ ເພື່ອແກ້ໄຂສະພາບການລັກລອບ ຊື້-ຂາຍ, ເຄື່ອນຍ້າຍ ສັດປ່າ ແລະ ສິ້ນສ່ວນສັດປ່າ ຈຶ່ງໄດ້ມີມາດຕະການດັ່ງນີ້:

1. ເພີ່ມທະວີຄວາມເຂັ້ມງວດ ໃນການກວດກາລາດຕະເວນຢູ່ຕາມເຂດຫຼໍ່ແຫຼມ ພ້ອມທັງລົງເກັບກຳຂໍ້ມູນ ບັນດາຫ້າງຮ້ານຂາຍເຄື່ອງປະດັບ ແລະ ຂອງທີ່ລະນຶກ ພາຍໃນແຂວງ ແລະ ເຂດເສດຖະກິດພິເສດ ສາມຫຼ່ຽມຄຳຢ່າງຕໍ່ເນື່ອງ.
2. ຕ້ອງດຳເນີນຄະດີຕໍ່ຜູ້ກະທຳຜິດ ຕາມລະບຽບ ແລະ ກົດໝາຍ ຢ່າງເຂັ້ມງວດ.
3. ສຳລັບຂອງກາງທີ່ຍຶດໄດ້ທັງໝົດໄດ້ຊີ້ນຳໃຫ້ກອງກວດກາປ່າໄມ້ແຂວງປະຕິບັດດັ່ງນີ້:
   - ສຳລັບສັດປ່າທີ່ຕາຍແລ້ວ ແມ່ນໃຫ້ຈັດພິທີທຳລາຍ
   - ສຳລັບສັດປ່າທີ່ຍັງມີຊີວິດ ໃຫ້ນຳໄປເຂົ້າສູນບຳບັດ ເພື່ອຟື້ນຟູສຸຂະພາບ ແລ້ວປ່ອຍຄືນສູ່ປ່າທຳມະຊາດ.
4. ປະເພດເຫຼົ່ານອງສິ້ນສ່ວນສັດປ່າ ແລະ ຜະລິດຕະພັນສັດປ່າ ແມ່ນໃຫ້ກອງກວດກາປ່າໄມ້ປົກປັກຮັກສາໄວ້ໃຫ້ດີເພື່ອການສຶກສາຄົ້ນຄ້ວາ.
5. ສຳລັບຜະລິດຕະພັນສິ້ນສ່ວນສັດປ່າທີ່ຍຶດໄດ້ ເຈົ້າໜ້າທີ່ປ່າໄມ້ ກົມກວດກາປ່າໄມ້ ຈະສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ຜູ້ຊ່ຽວຊານ ຕ້ອງໄດ້ເອົາໄປພິສູດວ່າ ສິ້ນສ່ວນຜະລິດຕະພັນສັດປ່າ ດັ່ງກ່າວເປັນຂອງແທ້ ຫຼື ຂອງປອມ ເພື່ອເປັນຫຼັກຖານ ໃນການດຳເນີນຄະດີຕໍ່ໄປ.

ນະຄອນຫຼວງວຽງຈັນ, ວັນທີ 4 ມັງກອນ 2019

**ຢັ້ງຢືນ**

**ຮອງ ຫົວໜ້າກົມກວດກາປ່າໄມ້**

ກົມກວດກາປ່າໄມ້

**ບ.ຫຼອມຄຳ ແສງຈັນອຸດົມ**